


## ການເຄື່ອນໄຫວສ້າງຂະບວນການສາມອີງການຈັດຕັ້ງຂອງ ສາຂາທຫລ ພາກກາງ ມອບເຄື່ອງຊ່ວຍເຫລືອ ໃຫ້ສະມາຄົມຄົນພິການຕາ ແຂວງສະຫວັນນະເຂດ





ໃນຕອນເຊົ້າຂອງວັນເສົາ ທີ 16 ກັນຍາ 2017 ຄະນະຮັບຜິດຊອບຂະບວນການສາມອີງການຈັດຕັ້ງມະຫາຊົນ ພ້ອມສະມາຊິກຕົວແທນສາມອີງການຈັດຕັ້ງ ສາຂາທຫລ ພາກກາງ ໄດ້ພ້ອມພຽງກັນໄປຮ່ວມສ້າງ ກິດຈະກຳມອບເຄື່ອງ ຊ່ວຍ ເຫລືອ ແລະ ມອບເປັນເງິນທຶນຈຳນວນໜຶ່ງເພື່ອປັບປຸງໂຕໜັງສືນູນ ແລະ ປະເພດເຄື່ອງ ທີ່ນຳໄປມອບໃນຄັ້ງນີ້ ເປັນປະຕິທິນ, ໝີ່ໄວໄວ, ນົມກ່ອງ, ນ້ຳຢາລ້າງຫ້ອງນ້ຳ ໂດຍໃຫ້ກຽດເຂົ້າຮ່ວມໂດຍທ່ານ ***ປອ. ນ ດ່ຽງຄຳ ແສງແກ້ວມີໄຊ*** ຮອງເລຂາໜ່ວຍພັກ ຮອງຫົວໜ້າສາຂາ ທຫລ ພາກກາງ ນຳພາຄະນະຮັບຜິດຊອບສ້າງຂະບວນການ ກັບສະມາຄົມຄົນ ພິການຕາ ແຂວງສະຫວັນນະເຂດ





ຄະນະຜິດຊອບໄດ້ກ່າວຈຸດປະສົງໃນການມາຊ່ວຍຫລືອໃນຄັ້ງນີ້ຕໍ່ສະມາຄົມຄົນພິການຕາ ໂດຍມີຈຳນວນຄົນເຂົ້າ ຮ່ວມທັງ ໝົດ **70 ຄົນ, ຍິງ 35 ຄົນ** ການສ້າງຂະບວນການເຄື່ອນໄຫວກິດຈະກຳໃນຄັ້ງນີ້ໄດ້ດຳເນີນໄປ ດ້ວຍບັນຍາກາດ ອັນເບີກ ບານມ່ວນຊື່ນ ໂດຍໄດ້ຮັບຟັງການຄຳຄວນສຽງຂັບຮ້ອງເພັງຂອງບັນດານ້ອງຍິງ-ຊາຍທີ່ພິການທາງສາຍຕາ ເຖິງແມ່ນວ່າ ສິພິການຕາ ແຕ່ເຂົາເຈົ້າກໍ່ຍັງມີຈິດໃຈທີ່ເຂັ້ມແຂງ ແລະ ພອນສະຫວັນໃນການຂັບຮ້ອງ ສາມາດເຮັດໃຫ້ເອື້ອຍອ້າຍນ້ອງ ສະມາຊິກສາມອີງການຈັດຕັ້ງມະຫາຊົນ ສາຂາທຫລ ພາກກາງ ມີຄວາມມ່ວນຊື່ນລື່ນເລີງ, ສະແດງຄວາມຮູ້ບຸນຄຸນ ຂອບອົກຂອບໃຈ, ດີໃຈເປັນຢ່າງຍິ່ງແບບບໍ່ເຄີຍ ມີມາກ່ອນທີ່ສາຂາທະນາຄານແຫ່ງ ສປປ ລາວ ພາກກາງ ແຂວງສະຫວັນ ນະເຂດ ລົງມາສ້າງກິດຈະກຳ ແລະ ມອບເຄື່ອງ ຊ່ວຍເຫລືອໃຫ້ແກ່ສະມາຄົມຄົນພິການຕາ ຄັ້ງນີ້ ລວມມູນຄ່າທັງໝົດ 2.200.000 ກີບ






***ຕອນທ້າຍ ສະມາຄົມຄົນພິການຕາຍັງໄດ້ຮັບການແຈກຢາຍອາຫານຫວ່າງ ( ວຸ້ນ ) ຈາກສະມາຊິກສາມ ອົງການຈັດຕັ້ງມະຫາຊົນ ສາຂາທຫລ ພາກກາງ ເຖິງມູນຄ່າບໍ່ສູງແຕ່ກໍ່ແມ່ນນໍ້າໃຈສັດທາເອື້ອເຟື້ອເພື່ອແຜ່ແກ່ສະມາຄົມ ຄົນພິການຕາ ແຂວງສະຫວັນນະເຂດ !***

ການເຄື່ອນໄຫວສ້າງຂະບວນການກິດຈະກຳຄັ້ງນີ້ໄດ້ສຳເລັດລົງ ໃນເວລາ 11ໂມງ 30 ນາທີ ດ້ວຍຄວາມເບີກບານມ່ວນຊື່ນ ປະສົມກັບຄວາມດີອົກດີໃຈ ແລະ ໄມຕີຈິດຂອງບັນດາ ເອື້ອຍອ້າຍນ້ອງ ສະມາຄົມຄົນພິການຕາ ມອບໃຫ້ໃຫ້ເອື້ອຍອ້າຍນ້ອງ ກໍ່ຄືຄະນະຮັບຜິດຊອບຂະບວນການ ສາມອົງການຈັດຕັ້ງມະຫາຊົນ ສາຂາທະນາຄານແຫ່ງ ສປປ ລາວ ພາກກາງ ແຂວງສະຫວັນນະເຂດ.

➢ ***<u>ພາບ-ຂ່າວ:</u>*** **ໄຊຍະສັກ ສີທາພົນ**


ທະນາຄານແຫ່ງ ສປປ ລາວ ແຂວງສະຫວັນນະເຂດ